**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເລກທີ 4677 /ຮສສ

ນະຄອນຫຼວງວຽງຈັນ, ວັນທີ 12/12/23

# ຂໍ້ຕົກລົງ
# ວ່າດ້ວຍ ການກຳນົດ ວຽກເບົາ ແລະ ວຽກທີ່ເປັນອັນຕະລາຍ ສຳລັບແຮງງານໄວໜຸ່ມ

- ອີງຕາມ ກົດໝາຍວ່າດ້ວຍແຮງງານ ສະບັບເລກທີ 43/ສພຊ, ລົງວັນທີ 24 ທັນວາ 2013;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 602/ນຍ, ລົງວັນທີ 14 ຕຸລາ 2021;
- ອີງຕາມ ໜັງລາຍງານຂອງກົມຄຸ້ມຄອງແຮງງານ ສະບັບເລກທີ 861/ກຮງ, ລົງວັນທີ 31 ຕຸລາ 2023.

**ລັດຖະມົນຕີ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມກວດກາວຽກງານກ່ຽວຂ້ອງກັບປະເພດວຽກເບົາທີ່ອະນຸຍາດໃຫ້ນຳໃຊ້ແຮງງານ ທີ່ມີອາຍຸຕ່ຳກວ່າ 14 ປີ ແຕ່ບໍ່ໃຫ້ຫຼຸດ 12 ປີ ແລະ ວຽກທີ່ເປັນອັນຕະລາຍທີ່ຫ້າມນຳໃຊ້ແຮງງານ ທີ່ມີອາຍຸຕ່ຳກວ່າ 18 ປີ ເພື່ອເຮັດໃຫ້ວຽກງານດັ່ງກ່າວໄດ້ຮັບການຈັດຕັ້ງປະຕິບັດຢ່າງເຂັ້ມງວດ ແນໃສ່ຮັບປະກັນບໍ່ໃຫ້ເກີດຜົນກະທົບຕໍ່ກັບສຸຂະພາບທາງດ້ານຮ່າງກາຍ, ມັນສະໝອງ, ຈິດໃຈ ແລະ ການສຶກສາຂອງແຮງງານໄວໜຸ່ມ.

### ມາດຕາ 2 ວຽກເບົາ ແລະ ວຽກອັນຕະລາຍ

ວຽກເບົາ ຫມາຍເຖິງ ວຽກທີ່ບໍ່ເປັນອັນຕະລາຍຕໍ່ສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈ, ບໍ່ສົ່ງຜົນກະທົບຕໍ່ ການພັດທະນາທາງດ້ານຮ່າງກາຍ, ມັນສະຫມອງ, ຈິດໃຈ ແລະ ການສຶກສາ ຊຶ່ງອະນຸຍາດໃຫ້ນຳໃຊ້ແຮງງານໄວຫນຸ່ມ ທີ່ມີອາຍຸຕ່ຳກວ່າ 14 ປີ ແຕ່ບໍ່ຫຼຸດ 12 ປີ.

ວຽກອັນຕະລາຍ ຫມາຍເຖິງ ວຽກທຸກປະເພດ ຊຶ່ງຕາມລັກສະນະ ແລະ ສະພາບຂອງວຽກນັ້ນ ມີຄວາມສ່ຽງໃນການເປັນອັນຕະລາຍຕໍ່ສຸຂະພາບທາງດ້ານຮ່າງກາຍ, ມັນສະໝອງ, ຈິດໃຈ, ສິນລະທຳ ແລະ ຄວາມປອດໄພຂອງແຮງງານໄວໜຸ່ມ.

**ມາດຕາ 3 ອະທິບາຍຄຳສັບ**

1. **ຜູ້ໃຊ້ແຮງງານ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ນຳໃຊ້ຜູ້ອອກແຮງງານໄວໜຸ່ມ ເຮັດວຽກໃຫ້ຕົນ ໂດຍຈ່າຍເງິນເດືອນ ຫຼື ຄ່າແຮງງານ ເປັນຄ່າຕອບແທນໃນການເຮັດວຽກ
2. **ຜູ້ອອກແຮງງານໄວໜຸ່ມ** ໝາຍເຖິງ ຜູ້ອອກແຮງງານ ທີ່ມີອາຍຸແຕ່ 12 ປີ ຫາ ຕໍ່າກວ່າ 18 ປີ
3. **ແຮງງານໃນລະບົບ** ໝາຍເຖິງ ຜູ່ອອກແຮງງານ ທີ່ເຮັດວຽກຢູ່ໃນຫົວໜ່ວຍແຮງງານ ຊຶ່ງໄດ້ຂຶ້ນທະບຽນຕາມກົດໝາຍ;
4. **ແຮງງານນອກລະບົບ** ໝາຍເຖິງ ຜູ່ອອກແຮງງານ ທີ່ເຮັດວຽກຢູ່ນອກຫົວໜ່ວຍແຮງງານ ລວມທັງຜູ້ເຮັດວຽກແບບອິດອິດສະລະ
5. **ແຮງງານໃນຄົວເຮືອນ** ໝາຍເຖິງ ຜູ້ທີ່ເຮັດວຽກໃຫ້ກັບຜູ້ນຳໃຊ້ແຮງງານໃນຄົວເຮືອນ ໂດຍໄດ້ຮັບເງິນເດືອນ ຫຼື ຄ່າແຮງງານ ເປັນຄ່າຕອບແທນ ບົນພື້ນຖານສັນຍາແຮງງານ ເຊັ່ນ: ເຮັດວຽກອານາໄມ, ປຸງແຕ່ງ ອາຫານ, ຊັກລີດ, ວຽກສວນຄົວ, ຂັບລົດ, ເຝົ້າເຮືອນ, ເບິ່ງແຍງສັດລ້ຽງ, ລວມທັງການເບິ່ງແຍງເດັກນ້ອຍ, ຜູ້ອາຍຸສູງ, ຄົນເຈັບ ແລະ ຄົນພິການ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານໄວໜຸ່ມ ໃນລະບົບ ແລະ ນອກລະບົບຫົວໜ່ວຍແຮງງານ ລວມທັງແຮງງານໃນຄົວເຮືອນ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ວ່າດ້ວຍວຽກເບົາ

**ມາດຕາ 5 ປະເພດວຽກເບົາ**

ປະເພດວຽກເບົາທີ່ອະນຸຍາດໃຫ້ນຳໃຊ້ແຮງງານ ທີ່ມີອາຍຸ 14 ປີ ແຕ່ບໍ່ຫຼຸດ 12 ປີ ມີດັ່ງນີ້:

1. **ຂົງເຂດບໍລິການ**

 1.1. ວຽກແຈກຢາຍຈົດໝາຍ, ໜັງສືພິມ, ປຶ້ມ, ວາລະສານ ຫຼື ໃບໂຄສະນາຕ່າງໆ ທີ່ຖືກຕ້ອງຕາມກົດໝາຍ;

 1.2. ວຽກກ່ຽວກັບການຮັບໃຊ້ການຫຼິ້ນກິລາເຊັ່ນ: ເກັບບານ, ເກັບລູກເທັນນິດ, ເກັບດອກປີກໄກ່;

 1.3. ວຽກປະເພດເກມການແຂ່ງຂັນທີ່ຈັດຂຶ້ນຢ່າງເປັນທາງການລວມທັງລາຍການທາງໂທລະພາບ, ວິທະຍຸ, ການສະແດງສິນລະປະວັນນະຄະດີ;

 1.4. ວຽກເສີບອາຫານ ແລະ ເຄື່ອງດື່ມທີ່ບໍ່ມີທາດມຶນເມົາ.

2. **ຂົງເຂດອຸດສາຫະກຳ ແລະ ຫັດຖະກຳ**

 2.1. ວຽກຫຸ້ມຫໍ່, ຄັດເລືອກ, ແກະອອກ ຫຼື ປະກອບເຂົ້າກັນສຳລັບສິ່ງຂອງປະເພດເບົາ;

 2.2. ວຽກຈັບ, ເກັບເຄື່ອງໃສ່ຖົງ ຫຼື ຫຸ້ມຫໍ່ແກັດເຄື່ອງ;

 2.3. ວຽກຈັດ ແລະ ແຍກເຄື່ອງນຸ່ງຫົ່ມສຳລັບຊັກລີດ;

 2.4. ວຽກກວດນັບສິນຄ້າ;

 2.5. ວຽກຕໍ່າຫູກ, ແກະລາຍຜ້າ, ປັ່ນເສັ້ນດ້າຍ, ສາວໄໝ, ຍ້ອມໄໝ, ທັກແສ່ວ;

 2.6. ວຽກຈັກສານເຄື່ອງຫັດຖະກຳທຸກປະເພດ;

2.7. ວຽກແກະສະຫຼັກ, ປັ້ນ, ຫຼໍ່, ຄວັດ, ແຕ້ມທີ່ສົ່ງເສີມ ແລະ ເປັນເອກະລັກຂອງຊາດທີ່ເຮັດດ້ວຍມື ໂດຍທີ່ບໍ່ໄດ້ນຳໃຊ້ເຄື່ອງຈັກ ຫຼື ທາດເຄມີ;

2.8. ວຽກຮ້ອຍ ແລະ ຂາຍພວງມະໄລ ແລະ ອື່ນໆ.

**3. ຂົງເຂດກະສິກຳ**

3.1. ວຽກປູກຝັງທີ່ນຳໃຊ້ຝຸ່ນຄອກ ຫຼື ຝຸ່ນຊີວະພາບທີ່ເປັນມິດຕໍ່ສຸຂະພາບ ແລະ ສິ່ງແວດລ້ອມ;

3.2. ວຽກບຳລຸງຮັກສາເບ້ຍໄມ້, ຕົ້ນໄມ້, ໝາກໄມ້ ແລະ ຜັກ;

3.3. ວຽກເກັບ ແລະ ຂາຍດອກໄມ້, ໝາກໄມ້ ແລະ ຜັກ;

3.4. ວຽກລ້ຽງສັດ, ກວາດຕ້ອນ ແລະ ວຽກດູແລສັດລ້ຽງທີ່ບໍ່ເປັນອັນຕະລາຍ;

3.5. ວຽກລ້ຽງສັດນ້ຳທີ່ບໍ່ເປັນອັນຕະລາຍເຊັ່ນ: ລ້ຽງປາ, ກົບ, ອ່ຽນ ເປັນຕົ້ນ;

3.6. ວຽກດຳນາ, ກ່ຽວເຂົ້າ ແລະ ຫຼົກກ້າ.

ປະເພດວຽກເບົາອື່ນ ທີ່ບໍ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ແມ່ນໃຫ້ປະຕິບັດຕາມເງື່ອນໄຂໃນການເຮັດວຽກທີ່ໄດ້ລະບຸໄວ້ໃນມາດຕາ 6 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 6 ເງື່ອນໄຂໃນການນຳໃຊ້**

ຜູ້ໃຊ້ແຮງງານສາມາດນຳໃຊ້ຜູ້ອອກແຮງງານໄວໜຸ່ມ ທີ່ມີອາຍຸຕ່ຳກວ່າ 14 ປີ ແຕ່ບໍ່ໃຫ້ຫຼຸດ 12 ປີ ເຮັດວຽກເບົາ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 5 ຂອງຂໍ້ຕົກລົງສະບັບນີ້ ບົນພື້ນຖານເງື່ອນໄຂ ດັ່ງນີ້:

- ວຽກທີ່ມີການ ຍົກ, ແບກ, ຫາບ, ລາກແກ່, ດຶງ ຫຼື ຍູ້ ທີ່ມີນ້ຳໜັກບໍ່ເກີນ 08 ກິໂລກຼາມ;
- ຊົ່ວໂມງເຮັດວຽກບໍ່ເກີນ 02 ຊົ່ວໂມງຕໍ່ວັນ ສຳລັບໄລຍະເປີດຮຽນ (ເປັນເວລານອກໂມງຮຽນ);
- ຊົ່ວໂມງເຮັດວຽກບໍ່ເກີນ 06 ຊົ່ວໂມງຕໍ່ວັນ ສຳລັບໄລຍະປິດສົກຮຽນ.

## ໝວດທີ 3
## ວຽກອັນຕະລາຍທີ່ຫ້າມນຳໃຊ້ແຮງງານໄວໜຸ່ມ ທີ່ມີອາຍຸຕ່ຳກວ່າ 18 ປີ

**ມາດຕາ 7 ປະເພດວຽກອັນຕະລາຍ**

ປະເພດວຽກອັນຕະລາຍທີ່ຫ້າມນຳໃຊ້ແຮງງານໄວໜຸ່ມ ທີ່ມີອາຍຸຕ່ຳກວ່າ 18 ປີ ມີດັ່ງນີ້:

1. ວຽກທຸກປະເພດທີ່ກ່ຽວຂ້ອງກັບການຜະລິດ, ຂົນຍ້າຍ ຫຼື ສຳພັດ, ແຕະຕ້ອງກັບສານເຄມີ ແລະ ສານພິດ ແລະ ສານທີ່ກໍ່ໃຫ້ເກີດເປັນພະຍາດມະເຮັງ, ລັງສີຂອງໄຟຟ້າ ຫຼື ຝຸ່ນລະອອງ ເຊັ່ນ:

1.1. ສານໄຍຫີນ (Asbestos);

1.2. ສານເບນຊິນ (Benzene);

1.3. ແຄດມີອອມ (Cadmium);

1.4 ທາດແມັກກຸຣີ ຫຼື ສານບາຫຼອດ (Mercury);

1.5 ສານກົ່ວ, ສານສັງກະສີ, ສານກົ່ວສີຂາວ, ສານກົ່ວໃນນ້ຳສີ;

1.6 ສານແຜ່ກຳມັນຕະພາບລັງສີ ແລະ ສານເຮືອງແສງຕ່າງໆ;

1.7. ລັງສີອິນຟາເຣດ, ລັງສີອຸນຕຣາໄວໂອເລດ, ແສງເລເຊີ, ຄື້ນຄວາມຖີ່ຂອງວິທະຍຸ

2. ວຽກທຸກປະເພດທີ່ກ່ຽວຂ້ອງກັບສານພິດທີ່ພາໃຫ້ເກີດພະຍາດຕິດຕໍ່

3. ວຽກທຸກປະເພດໃນຫ້ອງທົດລອງທີ່ເຮັດໜ້າທີ່ວິເຄາະຫາເຊື້ອພະຍາດຕ່າງໆ;

4. ວຽກທຸກປະເພດພາຍໃນສະຖານທີ່ກັກຂັງ ແລະ ໂຮງໝໍໂລກຈິດ;

5. ວຽກທຸກປະເພດທີ່ເບິ່ງແຍງ ດູແລຄົນເຈັບທີ່ເປັນພະຍາດຕິດຕໍ່ ຍົກເວັ້ນໂລກເອດ;

6. ວຽກທຸກປະເພດທີ່ອະນາໄມເຄື່ອງມືການແພດ ແລະ ຊັກເຄື່ອງນຸ່ງຫົ່ມຂອງຄົນເຈັບຢູ່ໃນສູນປິ່ນປົວສຸຂະພາບ, ຊັກເຄື່ອງທີ່ມີສານເຄມີອັນຕະລາຍ;

7. ວຽກທຸກປະເພດທີ່ ເກັບ, ຂົນຍ້າຍ ແລະ ທຳລາຍສິ່ງເສດເຫຼືອຈາກເຄື່ອງມືການແພດ ແລະ ຢາປົວພະຍາດທີ່ໃຊ້ແລ້ວ;

8. ວຽກທຸກປະເພດໃນໂຮງເຢັນ ຫຼື ຫ້ອງເກັບມ້ຽນຄົນຕາຍ, ວຽກບໍລິການກູ້ຊີບ;

9. ວຽກທຸກປະເພດຈັດມ້ຽນຊາກສົບຄົນຕາຍ ຫຼື ວຽກຂຸດຂຸມຝັງສົບ;

10. ວຽກທຸກປະເພດທີ່ກ່ຽວຂ້ອງກັບການອະນາໄມສິ່ງເປິະເປື້ອນ;

11. ບັນຊາ ຫຼື ເປັນຜູ້ຊ່ວຍບັນຊາເຄື່ອງກົນຈັກທຸກປະເພດ ທີ່ມີການເຄື່ອນເໜັງ ແລະ ສັ່ນສະເທືອນ;

12. ວຽກທຸກປະເພດ ທີ່ເຮັດຢູ່ບ່ອນສູງກວ່າ ສອງແມັດ ຈາກພື້ນ;

13. ວຽກທຸກປະເພດທີ່ເຮັດກັບຄວາມຮ້ອນ;

14. ການບັນຊາ ຫຼື ເຮັດວຽກໃນສະຖານີທີ່ມີໄຟຟ້າແຮງສູງ;

15. ວຽກທຸກປະເພດ ທີ່ກ່ຽວຂ້ອງກັບແຮ່ທາດ;

16. ວຽກທຸກປະເພດກ່ຽວກັບ ວັດຖຸລະເບີດ ແລະ ໄວໄຟ ທີ່ເປັນອັນຕະລາຍໃນນ້ຳ, ລວມທັງທາດລະເບີດ, ວັດຖຸໄວໄຟ, ທາດອົກຊີ, ອາຍແກັດ, ອາວຸດ, ບັ້ງໄຟດອກ ແລະ ວັດຖຸອື່ນໆທີ່ຈະເປັນສາເຫດຂອງການເກີດລະເບີດ ແລະ ເກີດໄຟ;

17. ວຽກທຸກປະເພດທີ່ເຮັດວຽກຢູ່ໃຕ້ດິນ, ການຂຸດທີ່ເລິກກວ່າໜຶ່ງແມັດ;

18. ວຽກທຸກປະເພດທີ່ເຮັດຢູ່ໃນສະຖານທີ່ ທີ່ມີລະເບີດຍັງບໍ່ທັນແຕກ;

19. ວຽກທຸກປະເພດໃນຂົງເຂດກະສິກຳທີ່ສຳພັດກັບສານເຄມີອັນຕະລາຍ ເປັນຕົ້ນ: ຢາຂ້າແມງໄມ້, ຢາຂ້າຫຍ້າ ແລະ ອື່ນໆ;

20. ວຽກທຸກປະເພດທີ່ກ່ຽວຂ້ອງກັບ ຂອງມຶນເມົາ;

21. ວຽກພື້ນນ້ຳ ລວມທັງການດຳນ້ຳ ຫຼື ການກູ້ຊີບໃນນ້ຳ;

22. ວຽກທຸກປະເພດ ທີ່ກ່ຽວຂ້ອງກັບການຂ້າສັດ;

23. ວຽກທຸກປະເພດໃນສະຖານທີ່ບັນເທີງ, ອາບອົບນວດ, ບໍລິການສິ່ງມຶນເມົາ ແລະ ສະຖານທີ່ຫຼິ້ນການພະນັນທຸກຊະນິດ;

24. ວຽກໃນກອງຂີ້ເຫຍື້ອ ແລະ ກອງເສດໂລຫະ, ເກັບຂີ້ເຫຍື້ອ ແລະ ທ້ອນໂຮມຂີ້ເຫຍື້ອນຳໃຊ້ຄືນໃໝ່;

25. ວຽກທຸກປະເພດທີ່ເຮັດວຽກກ່ຽວກັບສັດຮ້າຍ ຫຼື ສັດມີພິດ ເຊັ່ນ: ຝຶກສອນສັດ, ລ້ຽງສັດໃນສວນສັດ, ໂຮງໝໍປົວສັດ, ໃນໂຮງລະຄອນສັດ;

26. ວຽກຍົກ, ແບກ, ຫາບ, ລາກແກ່, ດຶງສິ່ງຂອງມີດັ່ງນີ້:

- ຜູ້ທີ່ມີອາຍຸແຕ່ 15 ປີ ຫາບໍ່ເຖິງ 16 ປີ ເປັນບາງຄັ້ງຄາວບໍ່ໃຫ້ເກີນ ສິບສອງ ກິໂລກຼາມ, ຖ້າເຮັດວຽກແບບຕໍ່ເນື່ອງເກີນກວ່າ ຫນຶ່ງຊົ່ວໂມງ ນໍ້າຫນັກບໍ່ໃຫ້ເກີນ ແປດ ກິໂລກຼາມ;
- ຜູ້ທີ່ມີອາຍຸແຕ່ 16 ປີ ຫາບໍ່ເຖິງ 18 ປີ ເປັນບາງຄັ້ງຄາວບໍ່ໃຫ້ເກີນ ຊາວຫ້າ ກິໂລກຼາມ, ຖ້າເຮັດ ວຽກແບບຕໍ່ເນື່ອງເກີນກວ່າ ຫນຶ່ງ ຊົ່ວໂມງ ນໍ້າຫນັກບໍ່ໃຫ້ເກີນ ສິບຫ້າ ກິໂລກຼາມ;

27. ວຽກທີ່ຕ້ອງຢືນ ຫຼາຍກວ່າ 2 ຊົ່ວໂມງຕິດຕໍ່ກັນ;

28. ວຽກໃນສະພາບແວດລ້ອມທີ່ມີແສງສະຫວ່າງບໍ່ພຽງພໍ;

29. ວຽກທຸກປະເພດທີ່ສໍາຜັດກັບຄວັນ, ຂີ້ຝຸ່ນ, ອາຍແກ໊ດ ແລະ ສານພິດອື່ນໆ;

30. ວຽກທຸກປະເພດ ໃນການຜະລິດອຸດສະຫະກໍາຢາສູບ ແລະ ທາດເຫຼົ້າ;

31. ວຽກທຸກປະເພດ ທີ່ມີລະດັບສຽງດັງ ຫຼື ສັ່ນສະເທືອນທີ່ຈະເປັນອັນຕະລາຍຕໍ່ແຮງງານໄວຫນຸ່ມ;

32. ວຽກທີ່ກໍານົດໄວ້ ໃນມາດຕາ 51 ວັກ 5 ແລະ ມາດຕາ 102 ຂອງກົດຫມາຍວ່າດ້ວຍແຮງງານ ສະບັບປັບປຸງ.

**ມາດຕາ 8 ການຍົກເວັ້ນ**

ຜູ້ໃຊ້ແຮງງານ ສາມາດນໍາໃຊ້ແຮງງານໄວຫນຸ່ມ ທີ່ມີອາຍຸຕໍ່າກວ່າ 18 ປີ ແຕ່ບໍ່ໃຫ້ຫຼຸດ 15 ປີ ເຮັດວຽກໃນໜ້າວຽກທີ່ເປັນອັນຕະລາຍ ຕາມມາດຕາ 7 ຂອງຂໍ້ຕົກລົງສະບັບນີ້, ຜູ້ໃຊ້ແຮງງານຕ້ອງສະເໜີເຖິງອົງການຄຸ້ມຄອງແຮງງານ ໂດຍໃຫ້ບອກແຈ້ງເຖິງຄວາມຈໍາເປັນ, ກໍານົດເວລາທີ່ຈະນໍາໃຊ້ ແລະ ບັນຊີລາຍຊື່ຂອງຜູ້ອອກແຮງງານ ກ່ອນຈະໄດ້ຮັບການຍົກເວັ້ນ ບົນພື້ນຖານເງື່ອນໄຂ ແລະ ຂັ້ນຕອນ ດັ່ງນີ້:

1. ໄດ້ຮັບການເຫັນດີຈາກກໍາມະບານຮາກຖານ ຫຼື ຜູ້ຕ່າງໜ້າຜູ້ອອກແຮງງານພາຍໃນຫົວໜ່ວຍແຮງງານ;
2. ໄດ້ຮັບການຝຶກອົບຮົມ ຈາກອົງການຄຸ້ມຄອງແຮງງານ, ໜ່ວຍງານບໍລິການວຽກງານດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ ທີ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງແຮງງານ ຫຼື ຂະແໜງການອື່ນທີ່ກ່ຽວຂ້ອງ;
3. ໄດ້ຮັບການແນະນໍາ ຫຼື ຝຶກອົບຮົມ ກ່ຽວກັບການໃຊ້ເຄື່ອງປ້ອງກັນສ່ວນບຸກຄົນຈາກໜ່ວຍງານທີ່ກ່ຽວຂ້ອງ;
4. ຜ່ານການໄດ້ຮັບການປະເມີນ ແລະ ກວດກາ ຈາກເຈົ້າໜ້າທີ່ກວດກາແຮງງານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ;

**ໝວດທີ 4**
**ຂໍ້ຫ້າມ**

**ມາດຕາ 9 ຂໍ້ຫ້າມ ສໍາລັບຜູ້ໃຊ້ແຮງງານ**

ຫ້າມ ຜູ້ໃຊ້ແຮງງານ ມີ ພຶດຕິກໍາ ດັ່ງນີ້:

1. ຮັບເອົາຜູ້ທີ່ມີອາຍຸ ຕໍ່າກວ່າ ສິບສອງປີ ເຂົ້າເຮັດວຽກ;
2. ປິດບັງ, ເຊື່ອງອໍາ, ປອມແປງ ຂໍ້ມູນ ໃນການນໍາໃຊ້ແຮງງານໄວໜຸ່ມ;
3. ນໍາໃຊ້ແຮງງານໄວໜຸ່ມ ເຮັດວຽກ ສອງພຽນ ໃນໜຶ່ງວັນ;

4. ນຳໃຊ້ແຮງງານໄວໜຸ່ມ ອາຍຸຕ່ຳກວ່າ 14 ປີ ແຕ່ບໍ່ຫຼຸດ 12 ປີ ເຮັດວຽກແຕ່ເວລາ 18:00 ໂມງຫາ 06:00 ໂມງເຊົ້າຂອງມື້ໃໝ່ ແລະ ເຮັດວຽກເພີ່ມໂມງ;
5. ນຳໃຊ້ແຮງງານໄວໜຸ່ມ ອາຍຸຕ່ຳກວ່າ 18 ປີ ແຕ່ບໍ່ຫຼຸດ 14 ປີ ເຮັດວຽກເພີ່ມໂມງ ແລະ ວຽກກາງຄືນ ແຕ່ເວລາ 22:00 ໂມງຫາ 06:00 ໂມງເຊົ້າຂອງມື້ໃໝ່;
6. ລະເມີດສັນຍາແຮງງານ ແລະ ກົດລະບຽບພາຍໃນ ຂອງຫົວໜ່ວຍແຮງງານ;
7. ລະເມີດສິດສ່ວນບຸກຄົນ ຂອງຜູ້ອອກແຮງງານໄວໜຸ່ມໃນສະຖານທີ່ເຮັດວຽກ;
8. ນຳໃຊ້ແຮງງານໄວໜຸ່ມດ້ວຍການບັງຄັບ ໃນທຸກຮູບແບບ ບໍ່ວ່າທາງກົງ ຫຼື ທາງອ້ອມ;
9. ຈຳແນກໂດຍທາງກົງ ຫຼື ທາງອ້ອມຕໍ່ ແຮງງານໄວໜຸ່ມ;
10. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 10 ຂໍ້ຫ້າມ ສຳລັບຜູ້ອອກແຮງງານໄວໜຸ່ມ**

ຫ້າມ ຜູ້ອອກແຮງງານໄວໜຸ່ມ ມີ ພຶດຕິກຳ ດັ່ງນີ້:

1. ປະລະໜ້າທີ່ ຫຼື ຢຸດເຊົາວຽກ ໂດຍບໍ່ມີເຫດຜົນ ແລະ ບໍ່ໄດ້ຮັບອະນຸຍາດຈາກຜູ້ໃຊ້ແຮງງານ;
2. ປະຕິເສດໃນການໃສ່ອຸປະກອນ ຫຼື ເຄື່ອງປ້ອງກັນສ່ວນບຸກຄົນທີ່ຜູ້ໃຊ້ແຮງງານສະໜອງໃຫ້;
3. ລະເມີດສັນຍາແຮງງານ ແລະ ກົດລະບຽບພາຍໃນ ຂອງຫົວໜ່ວຍແຮງງານ;
4. ລະເມີດສິດສ່ວນບຸກຄົນ ຂອງຄົນອື່ນໃນສະຖານທີ່ເຮັດວຽກ;
5. ປິດບັງ, ເຊື່ອງອຳ, ປອມແປງ ຂໍ້ມູນ ຂອງຕົນ ຕໍ່ຜູ້ໃຊ້ແຮງງານ ແລະ ເຈົ້າໜ້າທີ່ລັດທີ່ກ່ຽວຂ້ອງ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 11 ຂໍ້ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ມີ ພຶດຕິກຳ ດັ່ງນີ້:

1. ປິດບັງ, ເຊື່ອງອຳ, ປອມແປງເອກະສານ ເພີ່ມອາຍຸຂອງເດັກເພື່ອການເຂົ້າເຮັດວຽກ;
2. ໂຄສະນາ, ຊອກຫາ, ຂົນຂວາຍ, ນາບຂູ່, ຂົ່ມເຫັງ, ບັງຄັບ, ໃຊ້ກຳລັງ, ສວຍໃຊ້ອຳນາດ, ຊື້ຈ້າງ, ຈອບອອຍ, ຕົວະຍົວະຫຼອກລວງ, ຍຸຍົງ, ແນະນຳ, ຊັກຊວນ ນັກຮຽນທີ່ກຳລັງຮຽນ ໃຫ້ຂາດຮຽນ ຫຼື ອອກໂຮງຮຽນ ເພື່ອເຂົ້າເຮັດວຽກ ຫຼື ໃຫ້ມີການນຳໃຊ້ ຫຼື ຈ້າງງານນັກຮຽນ;
3. ໂຄສະນາ, ຊອກຫາ, ຂົນຂວາຍ ແຮງງານໄວໜຸ່ມໄປເຮັດວຽກຢູ່ຕ່າງປະເທດ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ການຄຸ້ມຄອງແຮງງານໄວໜຸ່ມ

**ມາດຕາ 12 ການຄຸ້ມຄອງແຮງງານໄວໜຸ່ມ**

ອົງການຄຸ້ມຄອງແຮງງານ ເປັນຜູ້ຮັບຜິດຊອບໂດຍກົງ ໃນການຄຸ້ມຄອງ ແລະ ກວດກາ ການນຳໃຊ້ແຮງງານໄວໜຸ່ມ ຊຶ່ງປະກອບດ້ວຍ:

1. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
2. ພະແນກແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນແຂວງ;
3. ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນເມືອງ;
4. ໜ່ວຍງານແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນບ້ານ.

**ມາດຕາ 13 ສິດ ແລະ ໜ້າທີ່ຂອງ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ, ປັບປຸງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບ, ຄູ່ມື ແລະ ສື່ສິ່ງພິມຕ່າງໆ ກ່ຽວກັບການຄຸ້ມຄອງ ແລະ ປົກປ້ອງແຮງງານໄວໜຸ່ມ;
2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກເບົາ ແລະ ວຽກອັນຕະລາຍ ສຳລັບແຮງງານໄວໜຸ່ມ;
3. ສ້າງແຜນງານ, ໂຄງການ ເພື່ອລົງຕິດຕາມ, ກວດກາ, ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງ ແລະ ການນຳໃຊ້ແຮງງານໄວໜຸ່ມ ໃນແຕ່ລະໄລຍະ;
4. ຝຶກອົບຮົມ ແລະ ຍົກລະດັບວຽກງານການຄຸ້ມຄອງ ແລະ ກວດກາ ການນຳໃຊ້ແຮງງານໄວໜຸ່ມ ໃຫ້ເຈົ້າໜ້າທີ່ກວດກາແຮງງານ ທົ່ວປະເທດ;
5. ໃຫ້ຄຳປຶກສາ ແລະ ພິຈາລະນາແກ້ໄຂບັນຫາ ກ່ຽວກັບແຮງງານໄວໜຸ່ມ;
6. ປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ກ່ຽວກັບການຄຸ້ມຄອງແຮງງານໄວໜຸ່ມ;
7. ພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານການຄຸ້ມຄອງ ແລະ ກວດກາ ການນຳໃຊ້ແຮງງານໄວໜຸ່ມ;
8. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງ ແລະ ກວດກາ ການນຳໃຊ້ແຮງງານໄວໜຸ່ມ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 14 ສິດ ແລະ ໜ້າທີ່ຂອງ ພະແນກແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນແຂວງ**

ພະແນກແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານການຄຸ້ມຄອງ ແລະ ປົກປ້ອງ ແຮງງານໄວໜຸ່ມ;
2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກເບົາ ແລະ ວຽກອັນຕະລາຍ ສຳລັບແຮງງານໄວໜຸ່ມ;
3. ຕິດຕາມ, ກວດກາ ການນຳໃຊ້ແຮງງານ ແລະ ຊຸກຍູ້ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນເມືອງ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ປົກປ້ອງການນຳໃຊ້ແຮງງານໄວໜຸ່ມ;
4. ຝຶກອົບຮົມ ແລະ ຍົກລະດັບວຽກງານການຄຸ້ມຄອງ ແລະ ກວດກາ ການນຳໃຊ້ແຮງງານໄວໜຸ່ມ ໃຫ້ແກ່ພະນັກງານຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນເມືອງ;
5. ໃຫ້ຄຳປຶກສາ ແລະ ພິຈາລະນາແກ້ໄຂບັນຫາ ກ່ຽວກັບແຮງງານໄວໜຸ່ມ;
6. ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບການຄຸ້ມຄອງແຮງງານໄວໜຸ່ມ;
7. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ກວດກາ ການນຳໃຊ້ແຮງງານໄວໜຸ່ມ ໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ອົງການປົກຄອງແຂວງ ຢ່າງເປັນປົກກະຕິ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 15 ສິດ ແລະ ໜ້າທີ່ຂອງ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນເມືອງ**

ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກເບົາ ແລະ ວຽກອັນຕະລາຍ ສໍາລັບແຮງງານໄວໜຸ່ມ;
2. ຕິດຕາມ, ກວດກາ, ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ປົກປ້ອງ ແຮງງານໄວໜຸ່ມ;
3. ຝຶກອົບຮົມ ແລະ ຍົກລະດັບວຽກງານການຄຸ້ມຄອງ ແລະ ກວດກາ ການນໍາໃຊ້ແຮງງານໄວໜຸ່ມ ໃຫ້ແກ່ໜ່ວຍງານແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນບ້ານ;
4. ໃຫ້ຄໍາປຶກສາ ແລະ ພິຈາລະນາແກ້ໄຂບັນຫາ ກ່ຽວກັບແຮງງານໄວໜຸ່ມ;
5. ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບການຄຸ້ມຄອງແຮງງານໄວໜຸ່ມ;
6. ເກັບກໍາຂໍ້ມູນ, ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ກວດກາ ການນໍາໃຊ້ແຮງງານໄວໜຸ່ມ ໃຫ້ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ແລະ ອົງການປົກຄອງເມືອງ ຢ່າງເປັນປົກກະຕິ;
7. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 16 ສິດ ແລະ ໜ້າທີ່ຂອງ ໜ່ວຍງານແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນບ້ານ**

ໜ່ວຍງານແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນບ້ານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກເບົາ ແລະ ວຽກອັນຕະລາຍ ສໍາລັບແຮງງານໄວໜຸ່ມ ໃນຂອບເຂດບ້ານຂອງຕົນ;
2. ໃຫ້ຄໍາປຶກສາ ແລະ ພິຈາລະນາແກ້ໄຂບັນຫາ ກ່ຽວກັບແຮງງານໄວໜຸ່ມ;
3. ເກັບກໍາຂໍ້ມູນ, ສະຫຼຸບ ແລະ ລາຍງານ ກ່ຽວກັບການນໍາໃຊ້ແຮງງານໄວໜຸ່ມ ໃຫ້ແກ່ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນເມືອງ;
4. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

## ໝວດທີ 6
## ການລາຍງານ ແລະ ການທົບທວນ

**ມາດຕາ 17 ການລາຍງານ**

ອົງການຄຸ້ມຄອງແຮງງານແຕ່ລະຂັ້ນ ຕ້ອງລາຍງານການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ຂັ້ນເທິງຂອງຕົນ ເປັນປົກກະຕິ ປະຈໍາເດືອນ, 3 ເດືອນ, 6 ເດືອນ ແລະ ປີ.

**ມາດຕາ 18 ການທົບທວນ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອທົບທວນ, ປັບປຸງ ສາລະບານວຽກເບົາ ແລະ ວຽກອັນຕະລາຍ ໃນແຕ່ລະໄລຍະຕາມຄວາມເຫມາະສົມ.

**ໝວດທີ 7**

**ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ**

**ມາດຕາ 19 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆ ຕາມລະບຽບກົດໝາຍ.

**ມາດຕາ 20 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

**ໝວດ 8**

**ການຈັດຕັ້ງປະຕິບັດ**

**ມາດຕາ 21 ການຈັດຕັ້ງປະຕິບັດ**

ກົມຄຸ້ມຄອງແຮງງານ, ບັນດາກົມພາຍໃນກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ, ນະຄອນ, ໜ່ວຍງານແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນບ້ານ, ເຈົ້າໜ້າທີ່ກວດກາແຮງງານ, ອົງການຈັດຕັ້ງທີ່ກ່ຽວຂ້ອງ ທຸກຂັ້ນ ເປັນເຈົ້າການໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 22 ຜົນສັກສິດ**

ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງວ່າດ້ວຍການກຳນົດວຽກທີ່ເປັນອັນຕະລາຍ ທີ່ຫ້າມນຳໃຊ້ແຮງງານໄວໜຸ່ມ ເລກທີ 4182/ຣສສ, ລົງວັນທີ 23 ພະຈິກ 2016 ແລະ ຂໍ້ຕົກລົງວ່າດ້ວຍການການົດວຽກເບົາສຳລັບຜູ້ອອກແຮງງານໄວໜຸ່ມ ອາຍຸລະຫວ່າງ 14 ປີ ແຕ່ບໍ່ຫຼຸດ 12 ປີ ເລກທີ 4183/ຣສສ, ລົງວັນທີ 23 ພະຈິກ 2016 ແລະ ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ລັດຖະມົນຕີ

**ໃບຄຳ ຂັດທິຍະ**